**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-----------------------

**ນະຄອນຫຼວງວຽງຈັນ**

ເລກທີ 02 /ຈນວ

ລົງວັນທີ 28 MAY 2015

# ຄຳສັ່ງ

## ກ່ຽວກັບການເພີ່ມທະວີສະກັດກັ້ນ ແລະ ປາບປາມຢາເສບຕິດ ໃນຂອບເຂດທົ່ວນະຄອນຫຼວງວຽງຈັນ

ເຖິງ: - ທ່ານຫົວໜ້າກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫລວງວຽງຈັນ;
- ທ່ານຫົວໜ້າກອງບັນຊາການທະຫານ ນະຄອນຫລວງວຽງຈັນ;
- ບັນດາທ່ານເຈົ້າເມືອງ, ຫົວໜ້າພະແນກການ ແລະ ຫົວໜ້າອົງການທຽບເທົ່າ ອ້ອມຂ້າງນະຄອນຫລວງວຽງຈັນ.

- ອີງຕາມ ພາກ III ວ່າດ້ວຍການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007;
- ອີງໃສ່ ຄຳສັ່ງ ສະບັບເລກທີ 22/ຄລສພ, ລົງວັນທີ 10 ສິງຫາ 2012 ວ່າດ້ວຍການເພີ່ມທະວີ ການສະກັດກັ້ນ ແລະ ຕ້ານຢາເສບຕິດ;
- ອີງຕາມ ມາດຕະການແກ້ໄຂຢາເສບຕິດ ຂອງລັດຖະບານ ຂໍ້ທີ 3.1 ຂອງຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 27/ນຍ, ລົງວັນທີ 5 ຕຸລາ 2011;
- ອີງຕາມ ຄຳສັ່ງ ຂອງທ່ານລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 818/ປກສ, ລົງວັນທີ 15 ມິຖຸນາ 2012 ວ່າດ້ວຍການສະກັດກັ້ນ ແລະ ປາບປາມຢາເສບຕິດ;
- ອີງຕາມ ມະຕິຕົກລົງຂອງກອງປະຊຸມ ຄະນະກຳມະການ ປກຊ-ປກສ ນະຄອນຫຼວງວຽງຈັນ ຄັ້ງວັນທີ 27 ກຸມພາ 2014.

ສັງເກດເຫັນວ່າ ສະພາບບັນຫາຢາເສບຕິດ ໃນປັດຈຸບັນ ທົ່ວນະຄອນຫຼວງວຽງຈັນເຖິງວ່າໄດ້ມີການສະກັດກັ້ນ ແລະ ປາບປາມຢ່າງຕໍ່ເນື່ອງ ຕະຫຼອດມາ ທັງໄດ້ໃຫ້ການບຳບັດປິ່ນປົວຢ່າງຈິດຈໍ່ ຈາກພາກລັດແຕ່ເຫັນວ່າການຊື້-ຂາຍ, ການລຳລຽງ ແລະ ເສບຢາເສບຕິດ ຍັງມີທ່າອ່ຽງເພີ່ມຂຶ້ນ, ແຜ່ລາມແຊກຊ້ອນເຂົ້າໃນຫລາຍຂົງເຂດ ແລະ ຫລາຍຊັ້ນຄົນ, ຊຶ່ງເປັນໄພຂົ່ມຂູ່ທີ່ງຕໍ່ຄວາມສະຫງົບ, ຄວາມປອດໄພຂອງສັງຄົມ, ເປັນໄພອັນຕະລາຍຕໍ່ອານາຄົດອັນສົດໃສຂອງລູກຫຼານ ແລະ ທັງເປັນການກີດໜ່ວງຖ່ວງດຶງການພັດທະນາ ນະຄອນຫຼວງວຽງຈັນ.

ເພື່ອຈັດຕັ້ງປະຕິບັດ ນະໂຍບາຍຂອງພັກ, ລັດຖະບານ ກໍຄື ກົດໝາຍຢາເສບຕິດ ໃຫ້ເຂັ້ມແຂງກ່ວາເກົ່າ

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຄຳສັ່ງ:

1. ໃຫ້ທຸກເມືອງ ແລະ ພະແນກການອ້ອມຂ້າງນະຄອນຫຼວງວຽງຈັນ ເພີ່ມທະວີການສະກັດກັ້ນ ແລະ ປາບ

ປາບປາມຢາເສບຕິດ ໃນທົ່ວຂອບເຂດ ພື້ນທີ່ຂອງຕົນໃຫ້ແຂັ້ມແຂງກ່ວາເກົ່າ, ໂດຍໃຫ້ເລັ່ງໃສ່ເປົ້າໝາຍຕົ້ນຕໍ ເພື່ອ ສະກັດກັ້ນ ແລະ ປາບປາມ ຄື:

**ໜຶ່ງ:** ຕໍ່ຜູ້ຜະລິດ ແລະ ປຸງແຕ່ງຢາເສບຕິດທຸກປະເພດ ຕາມຂອບກົດໝາຍກຳນົດ,

**ສອງ:** ຕໍ່ຜູ້ຊື້-ຂາຍ, ຈຳໜ່າຍ, ຄອບຄອງ, ຂົນສົ່ງ, ນຳເຂົ້າ, ສົ່ງອອກ ແລະ ນຳຢາເສບຕິດປະເພດຕ່າງໆ ຜ່ານ ນະຄອນຫຼວງວຽງຈັນ ແລະ

**ສາມ:** ສະກັດກັ້ນຕໍ່ຜູ້ເສບຢາເສບຕິດປະເພດຕ່າງໆ, ຊຶ່ງມາດຕາ 20 ໝວດທີ II ຂອງກົດໝາຍວ່າດ້ວຍຢາເສບຕິດກຳນົດໄວ້

**2. ການສະກັດກັ້ນ ແລະ ປາບປາມ ຢາເສບຕິດ ໃນບັ້ນນີ້ ແມ່ນເພື່ອແນໃສ່ຈຸດປະສົງລະດັບຄາດໝາຍໃຫ້ບັນລຸ ດັ່ງນີ້:**

2.1. ຮັບປະກັນໃຫ້ນະຄອນຫຼວງວຽງຈັນ ມີຄວາມສະຫງົບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມຢ່າງໜັກແໜ້ນ, ປະກອບສ່ວນເຂົ້າໃນການປະຕິບັດ ນະໂຍບາຍຂອງພັກ ແລະ ກົດໝາຍວ່າດ້ວຍຢາເສບຕິດ ໂດຍເຮັດແນວໃດໃຫ້ບັນຫາຢາເສບຕິດຫຼຸດນ້ອຍຖອຍລົງໃນພື້ນທີ່ນະຄອນຫຼວງວຽງຈັນ,

2.2. ຈຳກັດຮັດແຄບ ແລະ ກ້າວໄປເຖິງບ່ອນລົບລ້າງບັນຫາຢາເສບຕິດ ອອກຈາກຊີວິດສັງຄົມ.

2.3. ສະໜອງຕອບຄວາມຮຽກຮ້ອງຕ້ອງການ ແລະ ຄວາມມຸ້ງຫວັງຂອງປະຊາຊົນທຸກຊັ້ນຄົນທີ່ຢາກເຫັນນະຄອນຫຼວງວຽງຈັນເປັນເມືອງສະຫງົບສຸກ ແລະ ປອດໄພ ອຳນວຍຄວາມສະດວກໃນການເຮັດວຽກ ແລະ ດຳລົງຊີວິດ ຂອງຊາວເມືອງ.

2.4. ທັງເປັນການຂ່ຳນັບຮັບຕ້ອນ ແລະ ສ້າງບັນຍາກາດໃໝ່ ຂ່ຳນັບຮັບຕ້ອນກອງປະຊຸມໃຫຍ່ ແລະ ວັນບຸນສຳຄັນຕ່າງໆ ຂອງຊາດ ແລະ ກອງປະຊຸມສາກົນໃນຕໍ່ໜ້າ ໃຫ້ເປັນຈິງ.

**3. ການສະກັດກັ້ນ ແລະ ປາບປາມຢາເສບຕິດໃນຄັ້ງນີ້ ໃຫ້ດຳເນີນການຕາມທິດທາງສຳຄັນ ດັ່ງນີ້:**

- ການສະກັດກັ້ນ ແລະ ປາບປາມຢາເສບຕິດ ເລີ່ມຈາກສະຖາບັນຄອບຄົວ, ອົງການປົກຄອງຮາກຖານທຸກຂັ້ນ, ຫົວໜ່ວຍທຸລະກິດ, ການຈັດຕັ້ງລວມໝູ່, ທຸກຂະແໜງການ ແລະ ໃຫ້ດຳເນີນຢູ່ທຸກພື້ນທີ່, ທຸກຂົງເຂດ ໃນຂອບເຂດທົ່ວນະຄອນຫຼວງວຽງຈັນ, ໂດຍໃຫ້ຖືບັນຫາຢາເສບຕິດແມ່ນພິດໄພ ແລະ ທັງແມ່ນພັນທະໜ້າທີ່ທີ່ຕ້ອງແກ້ໄຂຂອງພົນລະເມືອງທຸກຄົນ, ຕ້ອງປຸກລະດົມໃຫ້ທຸກພາກສ່ວນເຂົ້າຮ່ວມ.

- ການສະກັດກັ້ນ ແລະ ປາບປາມຢາເສບຕິດ ຕ້ອງດຳເນີນໃຫ້ຄົບຖ້ວນ, ຖືກຕ້ອງຕາມຂັ້ນຕອນຂອງກົດໝາຍຢ່າງເຂັ້ມງວດ, ປາບປາມຖືກເປົ້າໝາຍຜູ້ກະທຳຜິດ, ຫ້າມສວຍໃຊ້ໜ້າທີ່ເພື່ອຫາຜົນປະໂຫຍດ, ບໍ່ປົກປ້ອງ ແລະ ບໍ່ເອື້ອອຳນວຍຄວາມສະດວກໃຫ້ກັບເປົ້າໝາຍ ແລະ ຜູ້ມີພຶດຕິກຳພົວພັນຢາເສບຕິດ.

- ດຳເນີນຫຼາຍວິທີການເພື່ອໃຫ້ຄອບຄົວ, ຍາດພີ່ນ້ອງຜູ້ໃກ້ຊິດ ສະແດງຄວາມເສຍໃຈຕໍ່ການກະທຳຜິດຜ່ານມາ ທັງຕ້ອງໃຫ້ການຮ່ວມມື, ບໍ່ຂັດຂວາງ, ບໍ່ອັກຄະຕິຕໍ່ບຸກຄົນ, ເຈົ້າໜ້າທີ່ ແລະ ການຈັດຕັ້ງ.

**4. ມາດຕະການຕົ້ນຕໍ ໃນການສະກັດກັ້ນ ແລະ ປາບປາມຢາເສບຕິດ ໃຫ້ປະຕິບັດຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 27/ນຍ, ຂໍ້ທີ 3.1 ແລະ ຄຳສັ່ງ ຂອງລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 818/ປກສ, ຂໍ້ທີ..** ,ໃນນັ້ນ ຢູ່ນະຄອນຫຼວງວຽງຈັນ ໃຫ້ເອົາໃຈໃສ່ ມາດຕະການສຳຄັນ ດັ່ງນີ້:

**ໜຶ່ງ:** ໃຫ້ເພີ່ມທະວີການສຶກສາອົບຮົມ, ເຜີຍແຜ່ຜົນຮ້າຍຂອງຢາເສບຕິດໃຫ້ພົນລະເມືອງ, ສະຖາບັນຄອບຄົວ, ຫົວໜ່ວຍ 10 ຫລັງຄາເຮືອນ, ໂຮງຮຽນ, ໂຮງງານ, ສຳນັກງານ-ອົງການ ໃຫ້ເຂົ້າໃຈ ຕໍ່ຜົນຮ້າຍ, ຄວາມ

ອັນຕະລາຍຂອງຢາເສບຕິດ ແລະ ຮູ້ສຶກຕື່ນຕົວ ຫຼີກລ້ຽງຈາກໄພອັນຕະລາຍ ຂອງຢາເສບຕິດ; ປະຕິບັດຄຳຂວັນ 4 ບໍ່: ບໍ່ຜະລິດ, ບໍ່ລຳລຽງຂົນສົ່ງ, ບໍ່ຂາຍ ແລະ ບໍ່ເສບຢາເສບຕິດ.

**ສອງ**: ໃຫ້ກຳແໜ້ນເປົ້າໝາຍ ແລະ ລົງເລິກ ສຶກສາອົບຮົມ ກ່າວເຕືອນໂດຍກົງ ຕໍ່ເປົ້າໝາຍ ທີ່ມີພຶດຕິກຳສົງໄສພົວພັນກັບບັນຫາຢາເສບຕິດ, ໂດຍມອບໃຫ້ ຜູ້ປົກຄອງຂັ້ນຕ່າງໆດຳເນີນການ ຄື: ນາຍບ້ານ, ປກສ ບ້ານເປັນຜູ້ຈັດຕັ້ງນຳພາໂດຍກົງຢູ່ບ້ານ, ສຳນັກງານ-ອົງການ, ໂຮງຮຽນ ແລະ ບັນດາໂຮງງານ.

**ສາມ**: ໃຫ້ເປີດຂະບວນການ "ປາບປາມຢາເສບຕິດ" ພ້ອມກັນບາດດຽວ ທົ່ວນະຄອນຫຼວງວຽງຈັນ, ໂດຍມີໜ່ວຍສະເພາະກິດ ຂອງນະຄອນຫຼວງວຽງຈັນ ແລະ ຢູ່ພາຍໃຕ້ການບັນຊາຂອງ ຫົວໜ້າກອງບັນຊາການ ປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ໃນວັນທີ 30 ພຶດສະພາ 2015 ເປັນຕົ້ນໄປ.

**ສີ່**: ໃຫ້ສືບຕໍ່ເປີດຂະບວນການ "ສ້າງບ້ານປອດຢາເສບຕິດ" ໃນທຸກໆເມືອງ, ທຸກສຳນັກງານ-ອົງການຂອງລັດ, ຂອງໂຮງຮຽນ, ສະຖາບັນການສຶກສາ, ໂຮງງານໃນນະຄອນຫລວງວຽງຈັນໂດຍພາຍໃຕ້ການຊີ້ນຳ-ນຳພາຂອງຄະນະພັກ, ຜູ້ອຳນວຍການບ່ອນນັ້ນໆ.

**ຫ້າ: ເພື່ອຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ເປັນຜົນເປັນຈິງ ມອບໃຫ້:**

+ ຫົວໜ້າໜ່ວຍສະເພາະກິດ ຂັ້ນນະຄອນຫລວງວຽງຈັນ ເປັນເຈົ້າການຈັດຕັ້ງປະຕິບັດ, ໂດຍແມ່ນຫົວໜ້າກອງບັນຊາການ ປກສ ນະຄອນຫລວງວຽງຈັນ ເປັນຜູ້ກຳກັບບັນຊາໂດຍກົງ; ທ່ານເຈົ້າເມືອງ, ທ່ານຫົວໜ້າພະແນກການ-ອົງການອ້ອມຂ້າງນະຄອນຫຼວງ, ຜູ້ອຳນວຍການໂຮງຮຽນ, ສະຖາບັນການສຶກສາ ແລະໂຮງງານ ໃນນະຄອນຫລວງວຽງຈັນເປັນເຈົ້າການໃນການຈັດຕັ້ງປະຕິບັດຢູ່ພື້ນທີ່ຕົນເອງ.

+ ໃຫ້ຄະນະໂຄສະນາອົບຮົມ, ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຫ້ອງການຄະນະກຳມະການ ກວດກາ ແລະ ຄວບຄຸມຢາເສບຕິດ ແລະ ສື່ມວນຊົນໃນນະຄອນຫລວງວຽງຈັນ ໂດຍອາໃສໜ່ວຍສະເພາະກິດເພື່ອສະກັດກັ້ນປາບປາມຢາເສບຕິດນະຄອນຫລວງ ເປັນຜູ້ເຜີຍແຜ່ການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້, ລວມເຖິງການເຮັດວຽກສຶກສາອົບຮົມແນວຄິດ ຕາມການຈັດຕັ້ງພັກ-ລັດ, ໂຮງຮຽນ, ສະຖາບັນການສຶກສາ, ໂຮງງານ, ພາກທຸລະກິດ, ປະຊາຊົນທົ່ວນະຄອນຫລວງວຽງຈັນ ໃຫ້ເຂົ້າຮ່ວມຂະບວນການ "ປາບປາມຢາເສບຕິດ" ໃຫ້ໄດ້ຮັບຜົນດີ.

5. ບັນດາເມືອງ, ພະແນກການ, ອົງການອ້ອມຂ້າງ, ໂຮງຮຽນ, ສະຖາບັນການສຶກສາ, ໂຮງງານ ໃນນະຄອນຫລວງວຽງຈັນ ຈົ່ງເອົາໃຈໃສ່ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ດ້ວຍຄວາມຮັບຜິດຊອບສູງ ແລະ ໃຫ້ຖືເປັນພັນທະ ແລະ ໜ້າທີ່ຂອງຕົນ ທີ່ຕ້ອງໄດ້ຮ່ວມກັນຈັດຕັ້ງປະຕິບັດວຽກງານຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດໃຫ້ໄດ້ຮັບຜົນດີ.

6. ໃຫ້ໜ່ວຍເພາະກິດ ຈັດຕັ້ງການປະເມີນ ແລະ ສະຫລູບລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ຄະນະນຳນະຄອນຫລວງວຽງຈັນ ເປັນປະຈຳແຕ່ລະເດືອນ.

7. ທຸກອົງການຈັດຕັ້ງພັກ-ລັດ, ເອກະຊົນ ແລະ ປະຊາຊົນນະຄອນຫລວງວຽງຈັນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ເກີດຜົນເປັນຢ່າງດີ. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າຄອງນະຄອນຫລວງວຽງຈັນ**

ດຣ.ສິນລະວົງ ຄຸດໄພທູນ

**ສຳເນົາສົ່ງ:**

- ເຈົ້າຄອງ-ຮອງເຈົ້າຄອງ ທ່ານລະ 01 ສະບັບ;
- ຄະນະຫ້ອງວ່າການປົກຄອງ, ນ.ວ ທ່ານລະ 01 ສະບັບ;
- ສຳເນົາ 02 ສະບັບ.